ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----=====000=====-----

Lao

ຄະນະກຳມະການຄຸ້ມຄອງຫຼັກຊັບ

Lao Securities Commission

ເລກທີ 0003/ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 02 FEB 2017

# ແຈ້ງການ

ເຖິງ: ບໍລິສັດຫຼັກຊັບ ທີ່ຖືກສ້າງຕັ້ງ ແລະ ເຄື່ອນໄຫວຢູ່ ສປປ ລາວ.

ເລື່ອງ: ການເຄື່ອນໄຫວວຽກງານຂອງບໍລິສັດຫຼັກຊັບ.

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມ ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງ ແລະ ການເຄື່ອນໄຫວຂອງບໍລິສັດຫຼັກຊັບ ສະບັບເລກທີ 002/ຄຄຊ, ລົງວັນທີ 24 ກໍລະກົດ 2013.

ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ) ແຈ້ງມາຍັງບັນດາບໍລິສັດຫຼັກຊັບ ທີ່ໄດ້ຮັບອະນຸຍາດຈາກ ຄຄຊ ໃນການສ້າງຕັ້ງ ແລະ ເຄື່ອນໄຫວຕາມລະບຽບກົດໝາຍຂອງ ສປປ ລາວ ຊາບວ່າ ໃນໄລຍະຜ່ານມາ ບໍລິສັດຫຼັກຊັບ ໄດ້ເອົາໃຈໃສ່ເຄື່ອນໄຫວທຸລະກິດຂອງຕົນຢ່າງຕັ້ງໜ້າ ແລະ ປະຕິບັດຕາມລະບຽບການ ເປັນຢ່າງດີ ອັນໄດ້ປະກອບສ່ວນສຳຄັນ ຕໍ່ກັບການພັດທະນາເສດຖະກິດ-ສັງຄົມ ຂອງ ສປປ ລາວ ເວົ້າລວມ ເວົ້າສະເພາະ ຕໍ່ ການພັດທະນາຕະຫຼາດທຶນຂອງ ສປປ ລາວ.

ເຖິງຢ່າງໃດກໍ່ຕາມ ອີງໃສ່ສະພາບການພັດທະນາຕະຫຼາດທຶນຂອງ ສປປ ລາວ ໃນໄລຍະນີ້ ແມ່ນຢູ່ໃນໄລຍະເລີ່ມຕົ້ນ, ຄວາມພ້ອມຂອງວິສາຫະກິດຍັງບໍ່ສູງ ເມື່ອທຽບໃສ່ມາດຖານເງື່ອນໄຂການອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ລວມທັງ ຄວາມຮັບຮູ້ ແລະ ຄວາມເຂົ້າໃຈຕໍ່ກັບວຽກງານຫຼັກຊັບຂອງສັງຄົມ ໂດຍສະເພາະຫົວໜ່ວຍວິສາຫະກິດ ຍັງແຄບຫຼາຍ.

ດັ່ງນັ້ນ ເພື່ອຮັບປະກັນການເລືອກເຟັ້ນເປົ້າໝາຍບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ໃຫ້ມີຈຸດສຸມ ແລະ ຮັບປະກັນຄວາມພ້ອມຮອບດ້ານຂອງວິສາຫະກິດເອງ ແນໃສ່ເຮັດໃຫ້ຕະຫຼາດທຶນຂອງ ສປປ ລາວ ຂະຫຍາຍຕົວແບບຍືນຍົງ, ຄະນະກຳມະການຄຸ້ມຄອງຫຼັກຊັບ ແຈ້ງມາຍັງບໍລິສັດຫຼັກຊັບ ໃຫ້ເອົາໃຈໃສ່ບາງບັນຫາ ດັ່ງນີ້:

1) ການພົບປະ ແລະ ເລືອກເຟັ້ນບໍລິສັດ (ລູກຄ້າ) ຄວນສຶກສາຄວາມອາດສາມາດ ແລະ ຄວາມພ້ອມຂອງລູກຄ້າ ຢ່າງມີຈຸດສຸມ ແລະ ຮັບປະກັນ. ກໍລະນີ ບໍລິສັດ ບໍ່ມີຄວາມພ້ອມ ກໍ່ຄວນໃຫ້ເວລາເພື່ອປັບປຸງແກ້ໄຂ;
2) ການເຂົ້າເຊັນສັນຍາທີ່ປຶກສາດ້ານການເງິນ (FA) ກັບ ບໍລິສັດເປົ້າໝາຍ ຄວນຜ່ານການຄົ້ນຄວ້າຢ່າງເລິກເຊິ່ງ ແລະ ຄວນປຶກສາຫາລື ກັບ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຢ່າງເປັນປົກກະຕິ (ກ່ອນການເຊັນສັນຍາ ຢ່າງໜ້ອຍ 3 ຫາ 6 ເດືອນ);



ຄະນະກຳມະການຄຸ້ມຄອງຫຼັກຊັບ, ບ້ານເພຍວັດ, ໜ່ວຍ 6, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ

ຕູ້ໄປສະນີ 19 ໂທລະສານ : (856)-21-21 7806 ໂທລະສັບ : (856)-21-217770 E-mail : lsco@lsc.gov.la

3) ການແນະນຳ ແລະ ໃຫ້ຂໍ້ມູນກ່ຽວກັບການໃຫ້ບໍລິການດ້ານທີ່ປຶກສາດ້ານການເງິນ ຕ້ອງມີຄວາມລະອຽດ ແລະ ຊັດເຈນ ເປັນຕົ້ນແມ່ນ ກົນໄກ, ຂັ້ນຕອນ ແລະ ພັນທະທັງໝົດຂອງທັງສອງຝ່າຍ ໂດຍສະເພາະ ຄ່າທຳນຽມທີ່ປຶກສາ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ອາດເກີດຂຶ້ນ ທີ່ຕິດພັນກັບການກະກຽມບໍລິສັດເພື່ອອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ;

4) ການກະກຽມຄວາມພ້ອມຮອບດ້ານ ສຳລັບບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງຮັບປະກັນດ້ານເງື່ອນໄຂທັງໝົດ ຕາມລະບຽບການກຳນົດ ແລະ ແກ້ໄຂບັນຫາຕ່າງໆທີ່ຕິດພັນ ກ່ອນຍື່ນຄຳຮ້ອງ ແລະ ເອກະສານປະກອບການຮ້ອງຂໍອອກຈຳໜ່າຍຫຼັກຊັບ;

5) ການກະກຽມຂໍ້ມູນ ແລະ ເອກະສານຕ່າງໆຂອງບໍລິສັດ ເພື່ອສະເໜີອອກຈຳໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງຮັບປະກັນຄວາມຖືກຕ້ອງ, ຄົບຖ້ວນ ແລະ ມີຖານຂໍ້ມູນອ້າງອີງ ທີ່ສາມາດທົບທວນຄືນໄດ້ ເປັນຕົ້ນແມ່ນ ການຄາດຄະເນຂໍ້ມູນທາງການເງິນ ຕ້ອງບົນພື້ນຖານຄວາມອາດສາມາດແທ້ຈິງຂອງບໍລິສັດ ແລະ ສອດຄ່ອງກັບສະພາບການພັດທະນາຂອງຂະແໜງການ, ທຸລະກິດ ແລະ ມະຫາພາກໂດຍລວມ.

ດັ່ງນັ້ນ, ຄະນະກຳມະການຄຸ້ມຄອງຫຼັກຊັບ ຈຶ່ງແຈ້ງມາຍັງບັນດາບໍລິສັດຫຼັກຊັບ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນນີ້ຈົດໃຈນີ້ດ້ວຍ.

ປະທານ
ຄະນະກຳມະການຄຸ້ມຄອງຫຼັກຊັບ

ສົມດີ ດວງດີ